ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ
========== 000 ==========

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)

0137
ເລກທີ .........../ທລຍ
ນະຄອນຫຼວງວຽງຈັນ, ວັນທີ 27 ກຸມພາ 2024

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ຈັດພິມແຜ່ນຮູບພາບ (Flash Card) ດ້ານໂພຊະນາການ
ເພື່ອຮັບໃຊ້ການສົນທະນາ ເພື່ອປ່ຽນແປງພຶດຕິກຳ ຂອງກຸ່ມເປົ້າໝາຍ ຢູ່ບ້ານເປົ້າໝາຍ ທລຍ ຊຸດທີ່ 2
ສັນຍາເລກທີ: PRF.III-AF/IEC/G-S/2024 (AF-G-039)

ເຖິງ: ______________________________

1. ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ເພື່ອດຳເນີນການປະມູນຈັດພິມແຜ່ນຮູບພາບ (Flash Card) ດ້ານໂພຊະນາການ ເພື່ອຮັບໃຊ້ການສົນທະນາ ເພື່ອປ່ຽນແປງພຶດຕິກຳຂອງກຸ່ມເປົ້າໝາຍ ຢູ່ບ້ານເປົ້າໝາຍ ທລຍ ຊຸດທີ່ 2, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫຼຸດຜ່ອນຄວາມທຸກຍາກ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດພິມດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 30 ວັນ. ຕາຕະລາງລະອຽດຂອງສິ່ງພິມມີດັ່ງລຸ່ມນີ້:

| ລ/ດ | ລາຍການສິ່ງພິມ | ຫົວໜ່ວຍ | ຈຳນວນ | ກຳນົດຈັດສົ່ງ | ສະຖານທີ່ຈັດສົ່ງ |
|---|---|---|---|---|---|
| 1 | ແຜ່ນຮູບພາບດ້ານໂພຊະນາການ ຂະໜາດ 29,78 X 42 ຊມ | ແຜ່ນ | 1692 | 30 ວັນ | ຫ້ອງການ ທລຍ ເມືອງ ຕາມແຜນແບ່ງປັນ:<br>- 4 ເມືອງ-ຜົ້ງສາລີ<br>- 1 ເມືອງ -ອຸດົມໄຊ<br>- 3 ເມືອງ-ຫົວພັນ ແລະ<br>- 2 ເມືອງ-ຊຽງຂວາງ |
| 2 | ແຜ່ນຮູບພາບດ້ານໂພຊະນາການ ຂະໜາດ 13 X 14 ຊມ | ແຜ່ນ | 9588 | | |

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.

4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 18/03/2024 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ, ຂອງວັນທີ 18/03/2024 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຂົງເຂດສໍານັກງານນາຍົກລັດຖະມົນຕີ ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.

5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕັ້ງຢູ່ໃນຂົງເຂດສໍານັກງານນາຍົກລັດຖະມົນຕີ, ຖະໜົນສີສະຫວາດ, ບ້ານນາໄຮ່ດຽວ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ຜູ້ອໍານວຍການ

ພັດນະຄອນ ຄັນທະມີໄຊ